ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ ໒໒໒ /ນຍ

ນະຄອນຫລວງວຽງຈັນ, ວັນທີ ໒໙.໐໙.໒໐໐໖

# ດຳລັດ
## ວ່າດ້ວຍກອງທຶນຫລຸດຜ່ອນຄວາມທຸກຍາກ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003 .
- ອີງຕາມ ໜັງສືສະເໜີຂອງປະທານສະພາບໍລິຫານ ກອງທຶນຫລຸດຜ່ອນຄວາມທຸກຍາກ ສະບັບເລກທີ 006/ທລຍ.ສພບ, ລົງວັນທີ 18 ກັນຍາ 2006.

## ນາຍົກລັດຖະມົນຕີ ອອກດຳລັດ :

### ພາກທີ 1
### ທີ່ຕັ້ງ ແລະ ພາລະບົດບາດ, ຈຸດປະສົງ, ໜ້າທີ່ ແລະ ຂອບເຂດສິດ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ.

**ມາດຕາ 1 ທີ່ຕັ້ງ ແລະ ພາລະບົດບາດ.**

ກອງທຶນຫລຸດຜ່ອນຄວາມທຸກຍາກ ຊຶ່ງຂຽນເປັນຕົວອັກສອນຫຍໍ້ວ່າ "ທ.ລ.ຍ." ແມ່ນການຈັດຕັ້ງໜຶ່ງ ທີ່ເປັນເຈົ້າຕົນເອງທາງດ້ານການເງິນ ທີ່ສ້າງຕັ້ງຂຶ້ນ ເພື່ອແກ້ໄຂ, ຈຳກັດ ແລະ ຫລຸດຜ່ອນຄວາມທຸກຍາກ ຂອງປະຊາຊົນ ບັນດາເຜົ່າ ກ້າວໄປເຖິງການຫລຸດພົ້ນອອກຈາກຄວາມທຸກຍາກໃນຂອບເຂດທົ່ວປະເທດ; ທ.ລ.ຍ. ເຄື່ອນໄຫວພາຍໃຕ້ກົດໝາຍ, ຂໍ້ກຳນົດ ແລະ ລະບຽບການ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຢູ່ພາຍໃຕ້ການຊີ້ນຳ ຂອງຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ.

**ມາດຕາ 2 ຈຸດປະສົງຂອງ ທ.ລ.ຍ.**

ຈຸດປະສົງຕົ້ນຕໍຂອງ ທ.ລ.ຍ. ແມ່ນໃຫ້ທຶນແກ່ການລົງທຶນຂະໜາດນ້ອຍ, ການບໍລິການ ແລະ ເພີ່ມທະວີຄວາມສາມາດຂອງທ້ອງຖິ່ນ ໃນການພັດທະນາບ້ານ ແລະ ກຸ່ມບ້ານ.

**ມາດຕາ 3 ໜ້າທີ່ຂອງ ທ.ລ.ຍ.**

**ກອງທຶນຫຼຸດຜ່ອນຄວາມທຸກຍາກ ມີໜ້າທີ່ຕົ້ນຕໍດັ່ງນີ້:**

3.1. ໃຫ້ຄວາມຊ່ວຍເຫລືອຢ່າງເໝາະສົມ ແລະ ມີປະສິດທິຜົນແກ່ຊຸມຊົນ ແລະ ບັນດາຫົວໜ່ວຍທີ່ຈະປະຕິບັດໂຄງການພັດທະນາທີ່ກ່ຽວຂ້ອງ.

3.2. ຈັດຕັ້ງລະບົບກວດກາການປະຕິບັດໂຄງການຍ່ອຍ ທີ່ໄດ້ເຊັນສັນຍາ ແລະ ການກວດກາບັນຊີປະຈຳປີ ຂອງ ທ.ລ.ຍ.

3.3. ຕິດຕາມກວດກາຄວາມຄືບໜ້າ, ຄວາມສອດຄ່ອງ ແລະ ການປະຕິບັດໂຄງການທີ່ພວມດຳເນີນຢູ່ ຕາມຈຸດປະສົງຂອງ ທ.ລ.ຍ.

3.4. ຕິດຕາມກວດກາ ແລະ ປະຕິບັດຢ່າງຄົບຖ້ວນ ການເບີກຈ່າຍໃຫ້ຖືກຕ້ອງຕາມກຳນົດເວລາ ແລະ ເງື່ອນໄຂທີ່ໄດ້ຕົກລົງໄວ້ ພ້ອມທັງແບ່ງປັນທຶນໃຫ້ສອດຄ່ອງຕາມຄວາມຕ້ອງການຕົວຈິງ ຂອງແຕ່ລະເຂດ.

3.5. ປະຕິບັດລະບຽບການ ກ່ຽວກັບການຈັດຊື້, ການເຮັດສັນຍາ ແລະ ການຊຳລະ ໂດຍສອດຄ່ອງກັບກົດໝາຍ, ຂໍ້ກຳນົດ ແລະ ລະບຽບການຂອງ ສປປ ລາວ ແລະ ບັນດາສັນຍາ ທີ່ໄດ້ເຊັນກັບອົງການຈັດຕັ້ງຕ່າງປະເທດທີ່ໃຫ້ແຫລ່ງທຶນແກ່ ທ.ລ.ຍ.

3.6. ໃຫ້ບູລິມະສິດແກ່ການຈັດຊື້ ວັດຖຸ-ອຸປະກອນ ທີ່ຜະລິດຢູ່ພາຍໃນປະເທດ ໂດຍນຳໃຊ້ທຶນຂອງ ທ.ລ.ຍ

3.7. ດຳເນີນກິດຈະການຂອງຕົນ ບົນພື້ນຖານຫລັກການປະສານສົມທົບ ແລະ ປຶກສາຫາລືກັບອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງ ຂອງລັດຖະບານ ກ່ຽວກັບໂຄງການທີ່ໄດ້ຮັບການສະໜັບສະໜູນຈາກ ທ.ລ.ຍ.

3.8. ຕີລາຄາ ແລະ ລາຍງານກິດຈະການຂອງ ທ.ລ.ຍ ກ່ຽວກັບການສະໜອງທຶນ, ຜົນໄດ້ຮັບ ແລະ ຜົນສະທ້ອນຂອງການດຳເນີນໂຄງການເປັນແຕ່ລະປີ ຫລື ຫລາຍກວ່ານັ້ນ ຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນ.

3.9. ປະຕິບັດກິດຈະການອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 4 ຂອບເຂດສິດຂອງ ທ.ລ.ຍ .**

**ກອງທຶນຫຼຸດຜ່ອນຄວາມທຸກຍາກມີສິດ ດັ່ງນີ້:**

4.1. ຮັບເອົາການສະໜັບສະໜູນ ຈາກທຸກແຫລ່ງການເງິນ ທີ່ຖືກຕ້ອງຕາມຈຸດປະສົງຂອງ ທ.ລ.ຍ. ເປັນຕົ້ນແມ່ນ: ການຊ່ວຍເຫລືອລ້າ, ການກູ້ຢືມຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ, ສະຖາບັນການເງິນລະຫວ່າງຊາດ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດທີ່ເຫັນພ້ອມກັບຈຸດປະສົງຂອງການສ້າງຕັ້ງ ທ.ລ.ຍ. ແລະ ການຫັກສ່ວນແບ່ງຈາກງົບປະມານ.

4.2. ຮັບເອົາການຊ່ວຍເຫລືອທາງດ້ານເຕັກນິກວິຊາການ ຈາກຜູ້ໃຫ້ທຶນຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ, ຂໍ້ກຳນົດ ແລະ ລະບຽບການ ຂອງ ສປປ ລາວ.

4.3. ໃຫ້ທຶນເພື່ອປະຕິບັດໂຄງການທີ່ສອດຄ່ອງກັບຈຸດປະສົງຂອງ ທ.ລ.ຍ. ແລະ ເຮັດສັນຍາກັບນິຕິບຸກຄົນທີ່ສັງກັດລັດ ແລະ ບໍ່ສັງກັດລັດ ໃນການຈັດຕັ້ງປະຕິບັດບັນດາໂຄງການດັ່ງກ່າວຢູ່ທ້ອງຖິ່ນ ຂັ້ນຕ່າງໆ.

## ພາກທີ II
## ການຄັດເລືອກໂຄງການ

**ມາດຕາ 5 ຫລັກການໃນການສະໜັບສະໜູນ**

ທ.ລ.ຍ. ໃຫ້ການສະໜັບສະໜູນແກ່ບັນດາໂຄງການ ຊຶ່ງໄດ້ອອກແບບ, ສະເໜີ ແລະ ຮັບຮອງເອົາໂດຍບ້ານ, ກຸ່ມບ້ານ ຫລື ເຂດ ຊຶ່ງຈະຕ້ອງນຳໃຊ້ຄວາມຊຳນິຊຳນານ ແລະ ການເຂົ້າຮ່ວມຂອງອົງການຈັດຕັ້ງທຸລະກິດ ແລະ ສັງຄົມ ຕາມຄວາມເໝາະສົມ. ສະພາບໍລິຫານຂອງ ທ.ລ.ຍ. ຈະບໍ່ເຂົ້າຮ່ວມໂດຍກົງ ໃນການປະຕິບັດໂຄງການໃດໜຶ່ງຂອງ ທ.ລ.ຍ.

**ມາດຕາ 6 ມາດຕະຖານຄັດເລືອກ**

ການຄັດເລືອກໂຄງການຂອງ ທ.ລ.ຍ ຈະຕ້ອງຮັບປະກັນມາດຕະຖານ ດັ່ງນີ້:

ກ. ເປັນໂຄງການຂະໜາດນ້ອຍ ຊຶ່ງຈຸດປະສົງຂອງໂຄງການ ແມ່ນສອດຄ່ອງກັບຈຸດປະສົງຂອງ ທ.ລ.ຍ ແລະ ມູນຄ່າສູງສຸດຂອງໂຄງການນັ້ນ ແມ່ນສະພາບໍລິຫານ ທ.ລ.ຍ ເປັນຜູ້ກຳນົດ;

ຂ. ການອອກແບບໂຄງການ ຕ້ອງມີມາດຖານດ້ານເຕັກນິກ ແລະ ຫົວໜ່ວຍລາຄາທີ່ເໝາະ ສົມ, ສາມາດບໍລິຫານ ແລະ ບຳລຸງຮັກສາໄດ້ງ່າຍ;

ຄ. ກິດຈະການທີ່ຈະປະຕິບັດ ຕ້ອງນຳໃຊ້ຄວາມສາມາດຂອງທ້ອງຖິ່ນ;

ງ. ໂຄງການຕ້ອງຕັ້ງຢູ່ເຂດຊົນນະບົດທີ່ມີອັດຕາສ່ວນຂອງຄວາມທຸກຍາກສູງ.

## ພາກທີ III
## ການຈັດຕັ້ງຂອງ ທ.ລ.ຍ.

**ມາດຕາ 7 ການຈັດຕັ້ງຂອງ ທ.ລ.ຍ.**

ການຈັດຕັ້ງ ຂອງ ທ.ລ.ຍ ປະກອບດ້ວຍ:

7.1. ສະພາບໍລິຫານ

7.2. ຜູ້ອຳນວຍການບໍລິຫານ

**ມາດຕາ 8 ໂຄງປະກອບການຈັດຕັ້ງ ຂອງສະພາບໍລິຫານ ທ.ລ.ຍ:**

8.1. ສະພາບໍລິຫານຂອງ ທ.ລ.ຍ ປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

- ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ເປັນ ປະທານ
- ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຮອງປະທານຄະນະກຳມະການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ເປັນຮອງປະທານຜູ້ທີໜຶ່ງ ແລະ ຜູ້ປະຈຳການ
- ຜູ້ຊົງຄຸນວຸດທິໜຶ່ງທ່ານ ເປັນຮອງປະທານຜູ້ທີສອງ
- ລັດຖະມົນຕີ ຊ່ວຍວ່າການກະຊວງການເງິນ, ກຳມະການ
- ຮອງປະທານ ຄະນະກຳມະການແຜນການ ແລະ ການລົງທຶນ, ກຳມະການ
- ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ກຳມະການ
- ຮອງປະທານສູນກາງແນວລາວສ້າງຊາດ; ກຳມະການ
- ຮອງປະທານສູນກາງສະຫະພັນແມ່ຍິງລາວ; ກຳມະການ
- ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ປະຊາຊົນປະຕິວັດລາວ; ກຳມະການ
- ຕົວແທນຂອງສັງຄົມພົນລະເຮືອນ. ກຳມະການ
- ຮອງເຈົ້າແຂວງທີ່ມີໂຄງການພາຍໃຕ້ກອງທຶນ ກຳມະການ

8.2. ຜູ້ອຳນວຍການບໍລິຫານ ຂອງ ທ.ລ.ຍ ປະຕິບັດໜ້າທີ່ ເປັນເລຂາທິການຂອງສະພາບໍລິຫານ ທ.ລ.ຍ.; ຖ້າຫາກມີຄວາມຈຳເປັນ, ສະພາບໍລິຫານອາດຈະເຊີນເອົາບຸກຄົນພາຍນອກເຂົ້າຮ່ວມພິຈາລະນາບັນຫາສະເພາະໃດນຶ່ງທີ່ກ່ຽວຂ້ອງກັບ ທ.ລ.ຍ. ການພິຈາລະນາບັນຫາດັ່ງກ່າວ ຈະສາມາດດຳເນີນໄດ້ ກໍຕໍ່ເມື່ອມີກຳມະການຂອງສະພາບໍລິຫານ ເຂົ້າຮ່ວມຢ່າງໜ້ອຍ 7 ທ່ານ.

8.3 ສະພາບໍລິຫານ ທ.ລ.ຍ ມີໜ້າທີ່ ດັ່ງນີ້:

- ຮັບຮອງເອົານະໂຍບາຍຂອງ ທ.ລ.ຍ. ຊຶ່ງນະໂຍບາຍດັ່ງກ່າວແມ່ນຕ້ອງອີງໃສ່ນະໂຍບາຍຫລຸດຜ່ອນຄວາມທຸກຍາກ ແລະ ແຜນງານຂອງລັດຖະບານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ;
- ກຳນົດນະໂຍບາຍສຳລັບການຄັດເລືອກ ແລະ ເງິນເດືອນຂອງພະນັກງານ ເພື່ອຮັບປະກັນການດຳເນີນງານຢ່າງມີປະສິດທິຜົນ ຂອງ ທ.ລ.ຍ;
- ຮັບຮອງເອົາຍຸດທະສາດ ກ່ຽວກັບການຫລຸດຜ່ອນຄວາມທຸກຍາກຂອງເມືອງ, ວິທີການ ແລະ ການຄັດເລືອກການເຂົ້າຮ່ວມຂອງເມືອງ ໃນການດຳເນີນງານຂອງ ທ.ລ.ຍ;
- ຮັບຮອງແຜນວຽກ ແລະ ງົບປະມານປະຈຳປີຂອງກອງທຶນ ແລະ ແຕ່ງຕັ້ງຜູ້ອຳນວຍການບໍລິຫານ ເພື່ອເຊັນສັນຍາກັບອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ທຶນແກ່ກອງທຶນ ໂດຍສອດຄ່ອງກັບນະໂຍບາຍການຮ່ວມມືທາງດ້ານການເງິນຕ່າງປະເທດ ແລະ ລະບຽບກົດໝາຍຂອງ ສປປ ລາວ;
- ຮັບຮອງເອົາລະບຽບ, ຫລັກການ ແລະ ຄູ່ມື ກ່ຽວກັບການດຳເນີນງານຂອງ ທ.ລ.ຍ;

- ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ກ່ຽວກັບການດຳເນີນງານຂອງ ທ.ລ.ຍ ທີ່ສະເຫນີໂດຍຜູ້ອຳນວຍການບໍລິຫານ;
- ຮັບປະກັນການດຳເນີນງານຂອງ ທ.ລ.ຍ ໃຫ້ສອດຄ່ອງກັບດຳລັດສະບັບນີ້ ແລະ ບັນດາລະບຽບ ແລະ ຫລັກການທີ່ກຳນົດໄວ້ໃນຄູ່ມືຂອງ ທ.ລ.ຍ;
- ສະພາບໍລິຫານ ຮັບຜິດຊອບການຄັດເລືອກ, ການຮັບເອົາ ແລະ ການຍົກເລີກສັນຍາ ກ່ຽວກັບຜູ້ອຳນວຍການບໍລິຫານ ທ.ລ.ຍ;
- ພິຈາລະນາ ແລະ ຮັບຮອງເອົາ ການແບ່ງປັນທຶນຊ່ວຍເຫລືອປະຈຳປີໃຫ້ແກ່ເມືອງ;
- ໂອນການເປັນເຈົ້າຂອງໂຄງການ ແລະ ການຄຸ້ມຄອງທຶນໃຫ້ຫົວໜ່ວຍ ຫລື ຊຸມຊົນທີ່ກ່ຽວຂ້ອງ ບົນພື້ນຖານລະບຽບກົດໝາຍ ຂອງ ສປປ ລາວ ແລະ ສັນຍາທີ່ ໄດ້ເຊັນກັບຜູ້ໃຫ້ທຶນ ເມື່ອໂຄງການຢູ່ບ່ອນນັ້ນສຳເລັດລົງ;
- ປະຕິບັດຫນ້າທີ່ ແລະ ຄວາມຮັບຜິດຊອບອື່ນໆທີ່ຈຳເປັນ ເພື່ອສຳເລັດຫນ້າທີ່ ແລະ ຈຸດປະສົງຂອງ ທ.ລ.ຍ.

8. 4 ສະພາບໍລິຫານ ທ.ລ.ຍ ປະຊຸມ ແລະ ພິຈາລະນາບັນຫາ ໃນທຸກເດືອນໃດເທື່ອຫນຶ່ງ ຫລື ຫລາຍກວ່ານັ້ນຖ້າຫາກມີຄວາມຕ້ອງການ ບົນພື້ນຖານການລົງຄະແນນສຽງດ້ວຍສຽງສ່ວນຫລາຍ ແລະ ມີການເຂົ້າຮ່ວມຂອງກຳມະການຢ່າງຫນ້ອຍ 7 ຄົນ.

**ມາດຕາ 9 ຫນ້າທີ່ ແລະ ອາຍຸການຂອງຜູ້ອຳນວຍການບໍລິຫານ :**

9.1. ຜູ້ອຳນວຍການບໍລິຫານຂອງ ທ.ລ.ຍ. ຖືກຄັດເລືອກ ແລະ ຕົກລົງຮັບຮອງ ໂດຍສະພາບໍລິຫານ ທ.ລ.ຍ. ແລະ ມີອາຍຸການ 3 ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ. ອາຍຸການດັ່ງກ່າວ ສາມາດຕໍ່ໄດ້ອີກບໍ່ເກີນ 2 ປີ.

9.2. ຜູ້ອຳນວຍການບໍລິຫານຂອງ ທ.ລ.ຍ. ຈະຕ້ອງດຳລົງຕຳແຫນ່ງເຕັມຕາມກຳນົດເວລາ, ມີຄວາມຊຳນານດ້ານບໍລິຫານ, ມີຄວາມສາມາດແກ້ໄຂທຸກບັນຫາ ແລະ ປະຕິບັດຫນ້າທີ່ເປັນເລຂາທິການຂອງສະພາບໍລິຫານ.

9.3. ຜູ້ອຳນວຍການບໍລິຫານຂອງ ທ.ລ.ຍ. ມີໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງນີ້ :

- ສ້າງ ແລະ ສະເຫນີແຜນນະໂຍບາຍຕໍ່ສະພາບໍລິຫານ ເພື່ອພິຈາລະນາ ແລະ ຮັບຮອງເອົາ;
- ສ້າງ ແລະ ສະເຫນີແຜນງານ, ໂຄງການ, ງົບປະມານປະຈຳປີ ແລະ ແຜນວຽກ, ປື້ມຄູ່ມື ກ່ຽວກັບການດຳເນີນງານຂອງກອງທຶນ ເພື່ອພິຈາລະນາ ແລະ ລາຍງານປະຈຳເດືອນຢ່າງເປັນປົກກະຕິຕໍ່ສະພາບໍລິຫານ;
- ຊີ້ນຳ ແລະ ບໍລິຫານກອງທຶນ ໃຫ້ສອດຄ່ອງກັບນະໂຍບາຍ ແລະ ລະບຽບການທີ່ສະພາບໍລິຫານໄດ້ຮັບຮອງເອົາ;

- ຕາງໜ້າ ທ.ລ.ຍ. ໃນການເຊັນຂໍ້ຜູກພັນ ຫລື ສັນຍາກັບອົງການ ແລະ ການຈັດຕັ້ງ ບົນພື້ນຖານນະໂຍບາຍ, ລະບຽບການ ແລະ ຄວາມຮັບຜິດຊອບທີ່ຖືກມອບໝາຍໃຫ້ໂດຍສະພາບໍລິຫານ;
- ຮັບສະໝັກ, ຄັດເລືອກ ແລະ ບັນຈຸສັບຊ້ອນພະນັກງານເຂົ້າເຮັດວຽກໃນຫ້ອງການບໍລິຫານກອງທຶນ ບົນພື້ນຖານການແຂ່ງຂັນ ແລະ ການຄັດເລືອກຢ່າງໂປ່ງໃສ ແລະ ຮັບຮອງເອົາໂດຍສະພາບໍລິຫານ;
- ຄຸ້ມຄອງຫ້ອງການບໍລິຫານຂອງ ທ.ລ.ຍ. ແລະ ພະນັກງານ ເພື່ອຍົກລະດັບການຄຸ້ມຄອງງົບປະມານ, ການປະເມີນຜົນຂອງໂຄງການ, ການຕີລາຄາການປະຕິບັດໂຄງການ, ການຊີ້ນຳ ແລະ ການຕິດຕາມກວດກາການເງິນຂອງໂຄງການ, ການຮັກສາຂໍ້ມູນ ແລະ ເອກະສານການເງິນຂອງໂຄງການ ໃຫ້ມີປະສິດທິພາບສູງ;
- ປະຕິບັດວຽກງານອື່ນໆ ຕາມສະພາບໍລິຫານກຳນົດ ຫລື ມອບໝາຍໃຫ້.

## ພາກທີ IV
## ງົບປະມານ ແລະ ການເຄື່ອນໄຫວດ້ານການເງິນຂອງ ທ.ລ.ຍ

### ມາດຕາ 10: ການປະກອບສ່ວນຂອງລັດຖະບານ

ລັດຖະບານສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການແບ່ງງົບປະມານຂອງລັດ, ການຊ່ວຍເຫລືອຂອງຕ່າງປະເທດແກ່ ທ.ລ.ຍ. ເພື່ອເປັນງົບປະມານ ສຳລັບຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຊຸມຊົນໄດ້ຢ່າງທັນການ. ລັດຖະບານຮັບປະກັນການໃຫ້ທຶນເບື້ອງຕົ້ນຢ່າງເໝາະສົມ ເພື່ອສ້າງຕັ້ງ ທ.ລ.ຍ.

### ມາດຕາ 11: ການຍົກເວັ້ນຄ່າທຳນຽມ ແລະ ພາສີ

ທຸກໆຂໍ້ຕົກລົງ ໃນສັນຍາກ່ຽວກັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພະຫານະທີ່ນຳເຂົ້າເພື່ອຮັບໃຊ້ໃນ ທ.ລ.ຍ ຈະຖືກຍົກເວັ້ນຄ່າທຳນຽມ, ພາສີ-ອາກອນນຳເຂົ້າ ຕາມທີ່ລະບຸໄວ້ໃນກົດໝາຍພາສີ; ສ່ວນຂໍ້ຕົກລົງ ແລະ ສັນຍາອື່ນໆ ທີ່ເຮັດຂຶ້ນເພື່ອປະຕິບັດໂຄງການຕ້ອງປະຕິບັດຕາມລະບຽບທີ່ກຳນົດໃນກົດໝາຍສ່ວຍສາອາກອນ ທີ່ມີຜົນນຳໃຊ້.

### ມາດຕາ 12: ບັນຊີຂອງ ທ.ລ.ຍ.

ເພື່ອຄວາມສະດວກໃນການຕິດຕາມກວດກາດ້ານການເງິນ, ທ.ລ.ຍ. ຈະຕ້ອງມີ ບັນຊີພິເສດໄວ້ໃນທະນາຄານ ແຫ່ງ ສປປ ລາວ ແລະ ຢູ່ສາຂາຂອງທະນາຄານທຸລະກິດຕ່າງໆ ຖ້າຫາກເຫັນວ່າຈຳເປັນ. ທຸກໆການໂອນ ແລະ ການໄຫລວຽນຂອງເງິນ ຈະຕ້ອງຜ່ານບັນຊີດັ່ງກ່າວ.

**ມາດຕາ 13: ການໂອນກຳມະສິດ**

ການຄຸ້ມຄອງການນຳໃຊ້ແຫລ່ງທຶນຂອງ ທ.ລ.ຍ ແລະ ການໂອນຄວາມຮັບຜິດຊອບທັງຫມົດກ່ຽວກັບໂຄງການໃຫ້ແກ່ລັດຖະບານ ຫລື ຊຸມຊົນ ເມື່ອໂຄງການນັ້ນຖືກປະຕິບັດຄົບຖ້ວນແລ້ວ ຈະຕ້ອງປະຕິບັດຕາມລະບຽບການ ທີ່ສະພາບໍລິຫານ ທ.ລ.ຍ. ໄດ້ກຳນົດ.

## ພາກທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການປ່ຽນແປງ**

ກອງທຶນຫຼຸດຜ່ອນຄວາມທຸກຍາກ ອາດຈະຖືກຍົກເລີກ, ປັບປຸງ ຫລື ໂຈະ ຕາມການສະເໜີ ຂອງສະພາບໍລິຫານ ຂອງ ທ.ລ.ຍ.

**ມາດຕາ 15 ເຄື່ອງໝາຍ ແລະ ກາປະທັບ**

ກອງທຶນຫລຸດຜ່ອນຄວາມທຸກຍາກ ມີເຄື່ອງຫມາຍ ແລະ ກາປະທັບເປັນຂອງຕົນເອງເພື່ອ ຮັບໃຊ້ໃນວຽກງານທາງລັດຖະການ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ທຸກອົງການຈັດຕັ້ງຂອງລັດ ແຕ່ສູນກາງລົງຮອດທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ບັນດາພາກສ່ວນທີ່ກ່ຽວຂ້ອງ ແລະ ພົນລະເມືອງທຸກຄົນ ມີໜ້າທີ່ຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 73 / ນຍ, ລົງວັນທີ 31 ພຶດສະພາ 2002.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**